ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ເລກທີ 1141 /ສທ

ນະຄອນຫຼວງວຽງຈັນ, ວັນທີ 25 SEP 2024

# ແຈ້ງການ

**ເຖິງ**: ທ່ານ ຫົວໜ້າກົມຄວບຄຸມພະຍາດຕິດຕໍ່;

ທ່ານ ຫົວໜ້າກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ ;

ທ່ານ ຫົວໜ້າສູນຕ້ານເອດ ແລະ ພຕພ ;

ທ່ານ ຫົວໜ້າສູນສະຖິຕິ ແລະ ຂ່າວສານສາທາລະນະສຸກ ;

ທ່ານ ຫົວໜ້າສູນສຸຂະພາບຜິວໜັງ ;

ທ່ານ ຫົວໜ້າພະແນກສາທາລະນະສຸກນະຄອນຫຼວງວຽງຈັນ ແລະ 17 ແຂວງໃນຂອບເຂດທົ່ວປະເທດ.

**ເລື່ອງ**: ເພີ່ມທະວີຄວາມເອົາໃຈໃສ່ໃນການຕິດຕາມເຝົ້າລະວັງ ເພື່ອປ້ອງກັນ ແລະ ຄວບຄຸມການຕິດເຊື້ອ ພະຍາດໝາກສຸກລີງ ( Monkeypox)

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກສະບັບເລກທີ 570/ ນຍ ລົງວັນທີ 19 ກັນຍາ 2021
- ອີງຕາມ ກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່, ສະບັບ ເລກທີ 024/ປປທ, ລົງວັນທີ 10 ກຸມພາ 2024
- ອີງຕາມ ການປະກາດຂອງອຳນວຍການອົງການອະນາໄມໂລກຄັ້ງວັນທີ 14 ສິງຫາ 2024 ວ່າດ້ວຍການປະກາດພະຍາດໝາກສຸກລີງ ( Monkeypox) ເປັນເຫດການສຸກເສີນດ້ານສາທາລະນະສຸກທີ່ສ້າງຄວາມກັງວົນໃຫ້ແກ່ສາກົນ

ພະຍາດໝາກສຸກລີງ ( Monkeypox ) ເປັນພະຍາດຕິດຕໍ່ຊະນິດໜຶ່ງທີ່ມີລາຍງານການລະບາດເພີ່ມຂຶ້ນຢ່າງຕໍ່ເນື່ອງໃນຫຼາຍຂົງເຂດໃນທົ່ວໂລກ ດັ່ງນັ້ນເພື່ອຮັບປະກັນວຽກງານກັນ ແລະ ຄວບຄຸມການລະບາດຂອງພະຍາດ ດັ່ງກ່າວອົງການອະນາໄມໂລກຈຶ່ງໄດ້ປະກາດພະຍາດໝາກສຸກລີງ ( Monkeypox) ເປັນເຫດການສຸກເສີນດ້ານສາທາລະນະສຸກທີ່ສ້າງຄວາມກັງວົນໃຫ້ແກ່ສາກົນ, ມາຮອດປັດຈຸບັນມີລາຍງານການຕິດເຊື້ອພະຍາດໝາກສຸກລີງ ( Monkeypox) ຈາກ 123 ປະເທດ ຊຶ່ງມີກໍລະນີຕິດເຊື້ອທັງໝົດ **103,446** ກໍລະນີ ແລະ ເສຍຊີວິດ **225** ກໍລະນີ, ສາຍພັນທີ່ເປັນສາເຫດຂອງການເກີດລະບາດໃນທົ່ວໂລກ ແມ່ນສາຍພັນ **clade IIb** ແລະ ນອກຈາກນີ້ຍັງມີສາຍພັນ ໃໝ່ ຄື ສາຍພັນ **clade Ib** ທີ່ເປັນສາເຫດຂອງການລະບາດໃນບາງປະເທດ, ສຳລັບຂົງເຂດອາຊຽນ ມີລາຍງານຜູ້ຕິດເຊື້ອທັງໝົດ 1,177 ກໍລະນີ ແລະ ເສຍຊີວິດ 18 ກໍລະນີ ຊຶ່ງໃນນີ້ຍັງມີບັນດາປະເທດ ທີ່ມີຊາຍແດນຕິດຈອດກັບ ສປປ ລາວ ກໍມີລາຍງານການຕິດເຊື້ອເຊັ່ນດຽວກັນ ເມື່ອອີງໃສ່ຂໍ້ມູນທາງດ້ານລະບາດວິທະຍາ ຈຶ່ງສາມາດສັງລວມໄດ້ວ່າ ສປປ ລາວ ມີຄວາມສ່ຽງ ສູງຕໍ່ການເກີດລະບາດ, ດັ່ງນັ້ນ ເພື່ອຮັບປະກັນການກະກຽມຄວາມພ້ອມໃນການກັນ ແລະ ຄວບຄຸມການລະບາດໃຫ້ໄດ້ໄວແຕ່ຫົວທີ ກະຊວງສາທາລະນະສຸກ ຈຶ່ງຂໍແຈ້ງມາຍັງບັນດາທ່ານໃນການເອົາໃຈໃສ່ເພີ່ມທະວີການຕິດຕາມເຝົ້າລະວັງ ເພື່ອຮັບປະກັນວຽກງານ ກັນ ແລະ ຄວບຄຸມການລະບາດ ຢ່າງເຂັ້ມງວດ ດັ່ງມີລາຍລະອຽດລຸ່ມນີ້:

Scanned with CamScanner

**I. ກົມຄວບຄຸມພະຍາດຕິດຕໍ່ :**

1. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອສ້າງແຜນງານແຫ່ງຊາດໃນການຮອງຮັບຕໍ່ການລະບາດຂອງພະຍາດພະຍາດໝາກສຸກລີງ ( Monkeypox) ທີ່ອາດຈະເກີດຂຶ້ນໃນຕໍ່ໜ້າ;
2. ປະສານສົມທົບກັບ ສູນວິເຄາະ ແລະ ລະບາດວິທະຍາ ເພີ່ມທະວີການປະສານງານລະຫວ່າງໂຮງໝໍເອກະຊົນ, ສູນປິ່ນປົວພະຍາດເອດ, ສູນຜີວໜັງ ເພື່ອໃຫ້ມີການເຝົ້າລະວັງ ແລະ ເກັບຕົວຢ່າງ ມາກວດໄດ້ໃນເວລາພົບກໍລະນີສົງໃສ
3. ປະສານສົມທົບກັບ ສູນວິເຄາະ ແລະ ລະບາດວິທະຍາ ສະຖາບັນປັດສະເຕີລາວ ແລະ ບັນດາຫ້ອງວິເຄາະອ້າງອີງ ເພື່ອກະກຽມຄວາມພ້ອມດ້ານບຸກຄະລາກອນ, ງົບປະມານ ແລະ ອຸປະກອນໃນ ການກວດຫາເຊື້ອພະຍາດ ແລະ ການນຳສົ່ງຕົວຢ່າງໃຫ້ທັນເວລາ;
4. ເພີ່ມທະວີການຕິດຕາມເຝົ້າລະວັງ ພະຍາດໝາກສຸກລີງ ( Monkeypox) ໃນຂອບເຂດທົ່ວປະເທດ ເພື່ອຮັບປະກັນ ໃຫ້ມີການລາຍງານ ແລະ ໂຕ້ຕອບຢ່າງທັນເວລາ;
5. ອອກຄຳແນະນຳກ່ຽວກັບການປ້ອງກັນຕົນເອງສຳລັບຜູ້ໂດຍສານ ທີ່ເດີນທາງເຂົ້າ-ອອກປະເທດ, ເຂດທີ່ມີຄວາມສ່ຽງ ແລະ ການຈັດງານໂຮມຊຸມນຸມທີ່ມີຫຼາຍຄົນເຂົ້າຮ່ວມ ເປັນຕົ້ນ ການຫຼີກລຽງການສຳຜັດໃກ້ຊິດກັບຜູ້ທີ່ມີອາການສົງໃສ ຫຼື ຕິດເຊື້ອພະຍາດໝາກສຸກລີງ ( Monkeypox) ລວມທັງການຮ່ວມເພດທີ່ບໍ່ປອດໄພ, ໝັ່ນລ້າງມືໃສ່ສະບູ, ເຈວລ້າງມືທີ່ມີທາດເຫຼົ້າ ແລະ ລ້າງນ້ຳໃຫ້ສະອາດ, ສຳລັບຜູ້ທີ່ສົງໃສວ່າຕົນເອງອາດຈະມີຄວາມສ່ຽງຕໍ່ການຕິດເຊື້ອ ແມ່ນໃຫ້ຫຼີກລຽງການເດີນທາງ ຫຼື ເຂົ້າຮ່ວມງານໂຮມຊຸມນຸມທີ່ມີຄົນຫຼາຍ ພ້ອມທັງໄປກວດຫາເຊື້ອເພື່ອແຍກຕົນເອງອອກຈາກຄົນອື່ນ ແລະ ປິ່ນປົວໂດຍໄວ;
6. ຕິດຕາມ, ປະສານງານແລກປ່ຽນຂໍ້ມູນຂ່າວສານກ່ຽວກັບການລະບາດຂອງພະຍາດໝາກສຸກລີງ ( Monkeypox ) ກັບບັນດາປະເທດໃກ້ຄຽງ ແລະ ສາກົນ;
7. ເປີດຫ້ອງປະຕິບັດເຫດການສຸກເສີນທາງດ້ານສາທາລະນະສຸກ ເພື່ອປະເມີນ ແລະ ຕິດຕາມສະພາບການລະບາດຂອງພະຍາດໝາກສຸກລີງ ( Monkeypox ) ຖ້າມີລາຍງານກໍລະນີ.

**II. ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ, ສູນຕ້ານເອດ ແລະ ພຕພ ແລະ ສູນສຸຂະພາບຜີວໜັງ :**

1. ປະສານສົມທົບກັບໂຮງໝໍ ສູນກາງ, ໂຮງໝໍແຂວງ, ໂຮງໝໍເອກະຊົນ ແລະ ຫ້ອງກວດພະຍາດເອກະຊົນໃນນະຄອນຫຼວງວຽງຈັນ ແລະ 17 ແຂວງທົ່ວປະເທດ ເພື່ອຮັບປະກັນການກະກຽມຄວາມພ້ອມທາງດ້ານບຸກຄະລາກອນ, ຄວາມອາດສາມາດໃນການຄຸ້ມຄອງກໍລະນີ, ການກວດກັ່ນກອງຄົນເຈັບໃນສະຖານທີ່ບໍລິການສາທາລະນະສຸກ, ຫ້ອງແຍກປ່ຽວ, ຢາປິ່ນປົວ ແລະ ອຸປະກອນການແພດອື່ນໆ ທີ່ຈຳເປັນ;
2. ຕິດຕາມເຝົ້າລະວັງເພື່ອຮັບປະກັນການຄົ້ນຫາກໍລະນີໃຫ້ໄດ້ໄວ ແລະ ການປິ່ນປົວໄດ້ຢ່າງທັນການ;
3. ເອົາໃຈໃສ່ວຽກງານ ກັນ ແລະ ຄວບຄຸມ ການຕິດເຊື້ອ ຢູ່ສະຖານທີ່ບໍລິການສາທາລະນະສຸກ ຢ່າງຕັ້ງໜ້າ.

**III. ສູນສະຖິຕິ ແລະ ຂ່າວສານສາທາລະນະສຸກ :**

1. ປະສານສົມທົບ ກັບ ພະແນກສາທາລະນະສຸກນະຄອນຫຼວງວຽງຈັນ ແລະ 17 ແຂວງ ແລະ ອຳນາດປົກຄອງທ້ອງຖິ່ນ ເພື່ອຮັບປະກັນວຽກງານໂຄສະນາສຸຂະສຶກສາກ່ຽວກັບການໃຫ້ຄວາມຮູ້ໃນການປ້ອງກັນພະຍາດໝາກສຸກລີງ ( Monkeypox) ;
2. ຮັບປະກັນໃຫ້ມີເຄື່ອງມືສຳລັບການໃຫ້ສຸຂະສຶກສາກ່ຽວກັບພະຍາດໝາກສຸກລີງ ( Monkeypox) ;
3. ເອົາໃຈໃສ່ວຽກງານໂຄສະນາເຜີຍແຜ່ຫຼາຍຮູບແບບໃນການໃຫ້ຄວາມຮູ້ກ່ຽວກັບພະຍາດພະຍາດໝາກສຸກລີງ( Monkeypox) ເພື່ອຮັບປະກັນໃຫ້ກຸ່ມສ່ຽງ ໄດ້ເຂົ້າຮັບການບໍລິການກວດຫາເຊື້ອ ແລະ ປິ່ນປົວໃຫ້ທັນເວລາເພື່ອປ້ອງກັນບໍ່ໃຫ້ມີການແຜ່ລະບາດໄປສູ່ວົງກ້ວາງໃນຕໍ່ໜ້າ.

Scanned with CamScanner

**IV. ພະແນກສາທາລະນະສຸກນະຄອນຫຼວງວຽງຈັນ ແລະ 17 ແຂວງໃນຂອບເຂດທົ່ວປະເທດ :**

1. ເອົາໃຈໃສ່ ເພີ່ມທະວີການຕິດຕາມເຝົ້າລະວັງ ເພື່ອຮັບປະກັນໃຫ້ສາມາດຊອກຄົ້ນຫາ ກໍລະນີຄົນເຈັບພະຍາດໝາກສຸກລີງ( Monkeypox)ຢູ່ຕາມສະຖານທີ່ ບໍລິການສາທາລະນະສຸກ ທັງພາກລັດ ແລະ ເອກະຊົນ ຢ່າງທັນການ;
2. ຖ້າພົບກໍລະນີສົງໄສ ທີ່ເຂົ້າກັບນິຍາມກໍລະນີ ຕ້ອງຮັບປະກັນໃຫ້ມີການລົງສອບສວນ ແລະ ລາຍງານຕາມຂັ້ນ ຢ່າງທັນການ;
3. ຮັບປະກັນການປະຕິບັດບັນດາມາດຕະການປ້ອງກັນການຕິດເຊື້ອ ຢ່າງເຂັ້ມງວດ;
4. ກະກຽມຄວາມພ້ອມໃນການ ຄຸ້ມຄອງກໍລະນີ;

ດັ່ງນັ້ນ ຈິ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ ຢ່າງເຂັ້ມງວດ

ລັດຖະມົນຕີ

ດຣ.ໄພວັນ ແກ້ວປະເສີດ

Scanned with CamScanner